**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງສາລະວັນ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ.1589./ຍທຂ.ສວ

ສາລະວັນ, ວັນທີ.23..3..2026

# ໜັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

**ເຖິງ :** ບັນດາບໍລິສັດທີ່ດຳເນີນກິດຈະການກໍ່ສ້າງ ແລະ ສ້ອມແປງ ຂົວທາງ ໃນຂອບເຂດທົ່ວປະເທດ ທີ່ນັບຖື.

**ເລື່ອງ:** ການເຊີນເຂົ້າຮ່ວມແຂ່ງຂັນການປະມູນລາຄາຫົວໜ່ວຍແບບເປີດກວ້າງ (ພາຍໃນ) ຂອງໂຄງການ ຟື້ນຟູສ້ອມແປງເສັ້ນທາງປູຢາງ 2 ຊັ້ນທາງເລກທີ 2.6912 ແຍກທາງເລກ 20 ເທດສະບານເມືອງເລົ່າງາມ ຫາ ບ້ານຜັກກູດ ຊາຍແດນແຂວງສາລະວັນ/ຈຳປາສັກ.

- **ອີງຕາມ** ກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 72/ສພຊ ລົງວັນທີ 15 ທັນວາ 2015, ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ກຜທ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການລົງທຶນຂອງລັດ ສະບັບເລກທີ 0889/ກຜຊ,ລົງວັນທີ  09ມິຖຸນາ 2021 ແລະ ຄຳແນະນຳ ກ່ຽວກັບການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
- **ອີງຕາມ** ຂໍ້ຕົກລົງຂອງແຂວງສາລະວັນ, ສະບັບເລກທີ 678/ຈຂ.ສວ, ລົງວັນທີ 25/04/2025. ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສາລະວັນ.
- **ອີງຕາມ** ແຈ້ງການ ແຜນການລົງທຶນຂອງລັດ ປີ 2026 ຂອງພະແນກ ການເງິນແຂວງ ສະບັບເລກທີ 32/ກງຂ.ສວ, ລົງວັນທີ 19/02/2026.

ພະແນກ ໂຍທາທິການ ແລະ ຂົນສົ່ງ, ຂໍຖືເປັນກຽດແຈ້ງເຊີນມາຍັງ ບໍລິສັດທີ່ດຳເນີນກິດຈະການກໍ່ສ້າງ ແລະ ສ້ອມແປງ ຂົວທາງ ທີ່ມີຄຸນວຸດທິ, ຄວາມສົນໃຈ ແລະ ທ່າແຮງ ໃນການເຂົ້າຮ່ວມແຂ່ງຂັນການປະມູນລາຄາຫົວໜ່ວຍແບບເປີດກວ້າງ(ພາຍໃນ). ສະເໜີຂາຍຊອງປະມູນ ເລີ້ມແຕ່ວັນທີ 23/03/2026 ຫາ ວັນທີ 25/04/2026 ເຊິ່ງລາຍລະອຽດມີດັ່ງນີ້ :

1. ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສາລະວັນ ໄດ້ຮັບໂຄງການໃໝ່ບ້ວງງົບປະມານ ລົງທຶນຂອງລັດປະຈຳປີ 2026.
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງ(ພາຍໃນ)ທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວ

ກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

3. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເໝາະສົມ ມີໃບອະນຸຍາດດຳເນີນທຸລະກິດ, ໃບທະບຽນວິສະຫະກິດ ທີ່ຖືກຕ້ອງຕາມກົດໝາຍ, ມີໃບຢັ້ງຢືນຍອດເຫຼືອດ້ານການເງິນ, ມີປະສົບການ ແລະ ຜົນງານໃນການກໍ່ສ້າງ ແລະ ສ້ອມແປງ ໃນໄລຍະຜ່ານມາ.
4. ບໍລິສັດທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນສອບຖາມຂໍ້ມູນເພີ່ມເຕີມໄດ້ຕາມທີ່ຢູ່ລຸ່ມນີ້ໃນໂມງລັດຖະການ: ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສາລະວັນ, ຂະແໜງ ຂົວທາງ ໂທ, ແຟັກ: (034) 211 256, (034) 211 506.
5. ທຸກໆບໍລິສັດທີ່ຕ້ອງຊື້ເອກະສານປະມູນຄົບຊຸດ ໃນລາຄາ 1.000.000 ກີບ/ຊອງປະມູນ (ໜຶ່ງລ້ານກີບຕໍ່ໜຶ່ງຊອງປະມູນ) ຈຳນວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ ແລະ ຕ້ອງແຈ້ງທຶນໝູນວຽນຂອງບໍລິສັດເອງ ຢ່າງໜ້ອຍ 30% ຂອງມູນຄ່າສະເໜີ ແລະ ເອກະສານປະມູນມີອາຍຸ 90 ວັນ ພາຍຫຼັງການເປີດຊອງປະມູນ.
6. ການລົງຢ້ຽມຢາມສະໜາມຈະໄດ້ຈັດຂຶ້ນ ໃນເວລາ 08 ໂມງ 30 ນາທີ ຂອງວັນທີ 26/04/2026 ເພື່ອຮັບຮູ້ສະພາບເງື່ອນໄຂ ແລະ ຄວາມຕ້ອງການຂອງວຽກຢູ່ສະໜາມ.
7. ກອງປະຊຸມກະກຽມກ່ອນການເປີດຊອງປະມູນ ຈະໄດ້ຈັດຂຶ້ນໃນເວລາ 08 ໂມງ 30 ນາທີ ຂອງວັນທີ 27/04/2026 ທີ່ຫ້ອງປະຊຸມ ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສາລະວັນ.
8. ເອກະສານປະມູນ ຕ້ອງສົ່ງເຖິງ ຄະນະກຳມະການປະມູນ ກ່ອນເວລາ 08 ໂມງ 45 ນາທີ ຂອງວັນທີ 13/05/2026 ຢູ່ທີ່ຫ້ອງປະຊຸມຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສາລະວັນ, ຊອງປະມູນຈະໄດ້ເປີດໃນເວລາ 09 ໂມງ 00 ນາທີ ຂອງວັນດຽວກັນ, ໂດຍຊ້ອງໜ້າຄະນະກາມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດ ຈະບໍ່ຖືກຮັບຮອງ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານປະທານ ຜູ້ອຳນວຍການບໍລິສັດ ພາຍໃນຂອບເຂດທົ່ວປະເທດ ຜູ້ທີ່ສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

**ຫົວໜ້າ ພະແນກ**

ບົວແພງເພັດ ໂພໄຊຍ໌